ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.

* ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.

ເລກທີ ໔໗໗/ປພຖຊ/໐໙໐໔໐໙

# ບົດຄວາມ

## ນະໂຍບາຍກວາດຕ້ອນ

ດຽວນີ້, ພັກຣັດໄດ້ຊຸ້ນຊ້ຽວ ກວາດຕ້ອນເອົາຄົນລາວນອກປະເທດ ທີ່ຍັງຫລົງເຫລືອຢູ່ນັ້ນ, ເຂົ້າມາດັບງຽບ.

ພັກຣັດ ໄດ້ໃຫ້ທ່ານ ຫງຽມ ພົມະຈັນ ທີ່ໄດ້ຮັບການສຶກສາ ຢູ່ປະເທດຕາວັນຕົກ ເປັນຫົວໜ້າຄນະ, ກວາດຕ້ອນໃນຖານະ ເປັນຮອງຣັຖມົນຕຣີຊ່ວຍວ່າການຕ່າງປະເທດ ແລະເປັນ ປະທານ ຄນະກັມການພົວພັນກັບຄົນລາວຕ່າງປະເທດ, ໃຫ້ພວກເຂົາຕົວະຍົວະຈອບວອຍເອົາກັນເອງ, ໂດຍທີ່ພັກຣັດຊຸກໄຫຍ້ຢູ່ເບື້ອງຫລັງ.

ທ່ານ ຫງຽມ ໄດ້ໃຫ້ສຳພາດ ຢູ່ວິທຍຸຝຣັ່ງສາກົນ ເມື່ອວັນທີ 6 ສິງຫາ 2009, ຍ້ອງຍໍພັກຣັດ ວ່າ ນະໂຍບາຍຂອງຣັຖບານ ຖືວ່າ "ປະເທດລາວ ເປັນຂອງຄົນລາວເຮົາ, ຢາກໃຫ້ທຸກຄົນເປັນເຈົ້ານຳກັນ. ຄົນລາວຢູ່ຕ່າງປະເທດ ກໍມີສິດ ເປັນເຈົ້າຄືກັນ, ເປັນເຈົ້າການ ໃນລັກສນະວ່າ ຕົນເອງໃນຕ່າງປະເທດ ຈະຕ້ອງເຮັດແນວໃດ... ໃຫ້ແກ່ປະເທດຊາດ. ທ່ານຢ້ຳໃນ ຕອນນຶ່ງ ວ່າ "ອັນທີ່ບໍ່ຄວນເຮັດ, ໝາຍຄວາມວ່າໄປຊ່ວຍກັນ ສ້າງບັນຫາໃຫ້ບ້ານໃຫ້ເມືອງ. ໃຫ້ບ້ານເມືອງແກ້ອັນນັ້ນ ກໍຄວນຫລີກເວັ້ນຢູ່ແລ້ວ! ທ່ານຫງຽມຄວນຈະບອກວ່າ ມັນແມ່ນອຳນາດ ຜເດັດການຄອມມິວນິສ. ທີ່ທຸກໆຄົນ "ພັກບອກ ຕ້ອງຟັງ-ຣັດສັ່ງ ຕ້ອງເຮັດ" ຈຶ່ງຈະຖືກຕ້ອງກວ່າ.

ທ່ານໄດ້ຍ້ອງຍໍການຈັດຕັ້ງສັມພັນຄົນລາວ ທີ່ຝຣັ່ງເສດ ວ່າ ເປັນບ່ອນເກັບກຳຂ່າວແລະລາຍງານໃຫ້ສະຖານທູດ, ຢູ່ບ່ອນອື່ນບໍ່ມີ! ເປັນຕົ້ນຢູ່ສະຫະຣັດອະເມຣິກາ.

ໃນຄວາມເປັນຈິງແລ້ວ, ການຈັດຕັ້ງຂອງຄົນລາວ ຢູ່ຕ່າງປະເທດ ມີຫລາຍທີ່ສຸດ! ແຕ່ພວກເຂົາບໍ່ໄດ້ຮັບໃຊ້ອຳນາດຜເດັດການໃນລາວ, ພັກຣັດຈິ່ງທຳຕົວບໍ່ຮັບຮູ້! ວ່າພວກເຂົາເປັນຄົນລາວ ຄືກັນກັບ ສະມາຄົມ **ສັມພັນຄົນລາວ** ຢູ່ຝຣັ່ງເສດ ແລະ **ສະຖາບັນແລກປ່ຽນລາວອະເມຣິກັນ** ຢູ່ສະຫະຣັດອະເມຣິກາ ໂດຍແມ່ນ ທ້າວ ສຸຣິວັນ ຄຳວົງໄຊ ເປັນຜູ້ຮັບຜິດຊອບຈັດຕັ້ງກອງປະຊຸມ ໃຫ້ທ່ານ ສົມສວາດ ເລັ່ງສວັດ, ທ່ານ ຫງຽມ ພົມມະຈັກເອງແລະທ່ານ ຫວ່າງ ໄປໂຄສະນາຊວນເຊື່ອ ... ແຕ່ຄົນລາວຢູ່ອະເມຣິກາ ບໍ່ງົມງາຍຫລົງເຊື່ອ...ໃນທີ່ສຸດ ກໍໝົດໄປ.

ກ່ຽວກັບກົນໄກຈັດຕັ້ງ ປະຕິບັດງານນັ້ນ, ທ່ານຫງຽມ ພົມມະຈັນ ບອກວ່າຈະມອບໃຫ້ສະຖານທູດລາວຕ່າງໆ ໃຫ້ມີຜູ້ກຳກັບສະເພາະ ຈັດຕັ້ງຂບວນການແນວໂຮມ ແມ່ຍິງ, ຊາວໜຸ່ມ ເພື່ອໂຄສະນາຊວນເຊື່ອ ຕາມນະໂຍບາຍ ຂອງພັກຣັດ, ດຶງດູດເອົາຄົນລາວກັບຄືນປະເທດ... ແຕ່ຢ່າລືມວ່າ ການທີ່ພັກຣັດອອກມາຈັດຕັ້ງ ຮັບຜິດຊອບເອົາຄົນລາວທົ່ວໂລກນັ້ນ ແມ່ນຜິດຕໍ່ກົດໝາຍການທູດ, ຖືເປັນການແຊກ ແຊງຄວາມໝັ້ນຄົງພາຍໃນ ຂອງປະເທດນັ້ນໆ. ພັກຣັດຕ້ອງຢຸດຕິ!

ເຖິງແມ່ນພັກຣັດ ຈະໂຄສນາຊວນເຊື່ອ ຊື້ຈ້າງຈອບອອຍ ໃຫ້ຄົນລາວ ກັບຄືນປະເທດໄດ້ຫລາຍປານໃດກໍຕາມ ບໍ່ສາມາດ ທີ່ຈະທັບມ້າງ ການຕໍ່ສູ້ຂອງພວກເຮົາ ປະຊາຊົນພັກແລະກຳລັງທັບ ເສຣີປະຊາທິປະໄຕລາວໄດ້; ເພາະພວກເຮົາ ບໍ່ໄດ້ຕໍ່ສູ້ ໃຫ້ນັກລົງທຶນ, ບໍ່ໄດ້ຕໍ່ສູ້ໃຫ້ ຜູ້ຮັ່ງມີ ແລະບໍ່ໄດ້ຕໍ່ສູ້ໃຫ້ຜູ້ໄດ້ຮັບອິສຣະພາບທຸກຢ່າງມາແລ້ວ...ແຕ່ພວກເຮົາ ແມ່ນ **ຕໍ່ສູ້ເພື່ອນຳເອົາ ສິດທິເສຣີພາບອັນແທ້ຈິງແລະສັນຕິສຸຂອັນຍາວນານ ມາໃຫ້ແກ່ປະຊາຊົນລາວທັງຊາດ ທີ່ທຸກຍາກລຳບາກ ຍ້ອນຂາດ ສິດທິເສຣີພາບທຸກຢ່າງ ຢູ່ພາຍໃຕ້ອຳນາດຜເດັດການພັກດຽວ.- ຕາບໃດທີ່ ປະຊາຊົນຍັງຂາດສິດທິເສຣີພາບ ຖືກກົດຂີ່ຂົ່ມເຫັງຢູ່..ໆ ຕາບນັ້ນ, ການຕໍ່ສູ້ຂອງຄົນລາວ ຕ້ອງມີຢູ່ສືບຕໍ່ໄປ.**

ນະໂຍບາຍກວາດຕ້ອນ **ເພື່ອ ດັບງຽບ** ນີ້, ຕ້ອງພົບກັບຄວາມປຣາໄຊຢ່າງແນ່ນອນ. ພັກຣັດ, ບໍ່ພຽງແຕ່ປຣາໄຊ ໃນການຕອບຕ້ານຍຸທສາດຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງຈັກກະພັດເທົ່ານັ້ນ; ຍັງປຣາໄຊ ໃນການປາບປາມນັກຕໍ່ສູ້ຕາມຊາຍແດນລາວ-ໄທຍ. ປຣາໄຊ ໃນການເອົາ ທະຫານ ວຽດນາມ ເຂົ້າມາກວາດລ້າງ ສີ່ແຂວງພາກໃຕ້, ພ້ອມທັງ ປະກາດດັບສູນການຕໍ່ສູ້ໃຫ້ໝົດໄປໃນປີ 2003 ອີກ ແລະ ຍັງປຣາໄຊ ໃນແຜນປິ້ນມືຄົນລາວ ນອກປະເທດ ທັບມ້າງກັນເອງອີກດ້ວຍ.... ແຕ່...ການຕໍ່ສູ້ ຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຍິ່ງເຂັ້ມແຂງ ແລະໄດ້ຮັບການສນັບສນູນ ອູ້ມຊູ ຈາກປະຊາຄົມໂລກ ຢ່າງແຂງແຮງ ແລະໂດດເດັ່ນຂຶ້ນທຸກໆວັນ.

ສນັ້ນ, ພັກຣັດ ສປປລາວ. ຢ່າໄດ້ລໍຊ້າ ໃຫ້ເສັຽເວລາ, ຈົ່ງອອກມາໂອ້ລົມກັບພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ຕາມແນວທາງສັນຕິວິທີ ໃຫ້ເປັນໄປຕາມທີ່

ປຶກສາຕ່າງປະເທດໄດ້ແນະນຳຕັກເຕືອນ, ເພາະລາວ ແມ່ນປະເທດ ທີ່ຕ້ອງແກ້ໄຂກ່ອນໝູ່ ໃນພາກພື້ນເອເຊັຽຕາວັນອອກສ່ຽງໃຕ້. ການເກັບເກນທະຫານ ເພື່ອຊັກເສິກເຂົ້າເມືອງ... ບໍ່ແມ່ນການແກ້ໄຂບັນຫາລາວທີ່ຖືກຕ້ອງ...ພັກຣັດບໍ່ຄວນທຳ ເພາະຖ້າມີຜົນເສັຽຫາຍໃດໆເກີດຂຶ້ນ... ພັກຣັດຕ້ອງເປັນຜູ້ຮັບຜິດຊອບແຕ່ຝ່າຍດຽວ.

ສູນກາງຕາງໜ້າ
ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ
ກອງວິຈັຍ
ວັນທີ ໐໔ ກັນຍາ ໔໐໐໙.